ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 62 /ຄປຈ

ນະຄອນຫລວງວຽງຈັນ, ວັນທີ 18 ພຶດສະພາ 2005

# ມະຕິຕົກລົງ

## ຂອງຄະນະປະຈຳສະພາແຫ່ງຊາດໃນການ ຕີຄວາມໝາຍມາດຕາ 25 ຂອງກົດໝາຍວ່າດ້ວຍຊັບສິນຂອງລັດ, ມາດຕາ 25, 26, 27 ແລະ 32 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ

ອີງຕາມມາດຕາ 56 ຂໍ້ 2 ຂອງລັດຖະທຳມະນູນ ແຫ່ງ ສປປ ລາວ ກ່ຽວກັບສິດ ແລະໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດໃນການຕີຄວາມໝາຍ, ອະທິບາຍລັດຖະທຳມະນູນ ແລະກົດໝາຍ,

ຄະນະປະຈຳສະພາແຫ່ງຊາດ ຕີຄວາມໝາຍມາດຕາ 25 ຂອງກົດໝາຍວ່າດ້ວຍຊັບສິນຂອງລັດ, ມາດຕາ 25, 26, 27 ແລະ 32 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ ດັ່ງນີ້:

ມາດຕາ 1. ມາດຕາ 25 ຂອງກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 09/ສພຊ, ລົງວັນທີ 12 ຕຸລາ 2002 ໄດ້ກຳນົດຫລັກການລວມກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ, ທາງແພ່ງ ແລະທາງອາຍາ ທີ່ພົວພັນກັບຊັບສິນຂອງລັດ. ສຳລັບການແກ້ໄຂຂໍ້ຂັດແຍ່ງທາງແພ່ງທີ່ພົວພັນກັບຊັບສິນຂອງລັດ ຊຶ່ງຄູ່ສັນຍາຝ່າຍໜຶ່ງເປັນນັກລົງທຶນຕ່າງປະເທດ ຫລືນິຕິບຸກຄົນລາວ ທີ່ມີນັກລົງທຶນຕ່າງປະເທດ ຊຶ່ງໄດ້ເຊັນສັນຍາກັບບຸກຄົນ ຫລືນິຕິບຸກຄົນ ລວມທັງລັດຖະບານ ສປປ ລາວ ໂດຍຕົກລົງວ່າຈະແກ້ໄຂຂໍ້ຂັດແຍ່ງດ້ວຍຮູບການອື່ນ ລວມທັງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດສາກົນນັ້ນ ສັນຍາດັ່ງກ່າວຈະມີຜົນສັກສິດ ໃຊ້ໄດ້ຢູ່ ສປປ ລາວ ແລະຜູກມັດຄູ່ສັນຍາ.

ມາດຕາ 2. ມາດຕາ 25, 26, 27 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ ສະບັບເລກທີ 11/ສພຊ, ລົງວັນທີ 22 ຕຸລາ 2004 ໄດ້ກຳນົດຫລັກການລວມກ່ຽວກັບການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຕ່າງປະເທດ. ສຳລັບການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຕ່າງປະເທດ ຊຶ່ງຄູ່ສັນຍາຝ່າຍໜຶ່ງເປັນນັກລົງທຶນຕ່າງປະເທດ ຫລືນິຕິບຸກຄົນລາວ ທີ່ມີນັກລົງທຶນຕ່າງປະເທດ ຊຶ່ງໄດ້

ເຊັນສັນຍາກັບບຸກຄົນ ຫລືນິຕິບຸກຄົນ ລວມທັງລັດຖະບານ ສປປລາວ ໂດຍມີການຕົກລົງວ່າຈະແກ້ໄຂຂໍ້ຂັດແຍ່ງດ້ວຍຮູບການອື່ນ ລວມທັງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດສາກົນນັ້ນ ສັນຍາດັ່ງກ່າວຈະມີຜົນສັກສິດ ໃຊ້ໄດ້ຢູ່ ສປປ ລາວ ແລະຜູກມັດຄູ່ສັນຍາ.

ມາດຕາ 3. ມາດຕາ 32 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ ສະບັບເລກທີ 11/ສພຊ, ລົງວັນທີ 22 ຕຸລາ 2004 ໄດ້ມີການຮັບຮູ້ບັນດາສິດ, ຜົນປະໂຫຍດ ແລະພັນທະ ທັງໝົດ ຊຶ່ງນັກລົງທຶນຕ່າງປະເທດໄດ້ຮັບ ຫລືຕ້ອງໄດ້ປະຕິບັດ ພາຍໃຕ້ກົດໝາຍວ່າດ້ວຍການສົ່ງເສີມ ແລະຄຸ້ມຄອງການລົງທຶນຕ່າງປະເທດ ສະບັບເລກທີ 01/94/ສປຊ ແມ່ນຍັງມີຜົນສັກສິດ ແລະສາມາດໃຊ້ໄດ້ຢູ່ ສປປ ລາວ. ບັນດາສິດ, ຜົນປະໂຫຍດ ແລະພັນທະເຫລົ່ານັ້ນ ຈະຕົກເປັນຂອງຜູ້ຖືຮຸ້ນໃໝ່ທີ່ໄດ້ຮັບການຮັບຮອງຈາກຄະນະກຳມະການສົ່ງເສີມ ແລະຄຸ້ມຄອງການລົງທຶນຕ່າງປະເທດ ບັນດາສິດ, ຜົນປະໂຫຍດ ແລະພັນທະເຫລົ່ານັ້ນ ແມ່ນລວມເອົາທັງສິດໃນການເລືອກເອົາຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດສາກົນ ຕາມການຕົກລົງໃນສັນຍາ ພາຍຫລັງທີ່ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ ສະບັບເລກທີ 11/ສພຊ, ລົງວັນທີ 22 ຕຸລາ 2004 ມີຜົນສັກສິດ.

ມາດຕາ 4. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ

ຜູ້ປະຈຳການ

ປານີ ຢາທໍ່ຕູ້